SYLISONGKHAM et al. (2022). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 162 - 168

# ການບໍລິຫານວຽກງານວິຊາການ ໂຮງຮຽນປະຖົມສຶກສາ ເມືອງສາລະວັນ ແຂວງສາລະວັນ

**ສົມບູນ ສີລີສົງຄາມ[1], ພູວົງ ໜໍ່ດາລາ[2], ເຮີ ຄໍາມີລີໄຊຊື[2], ບອຍ ດວງຈັນ[2] ແລະ ສຸລິນທອງ ໄຊດວງຕາ[2]**

*ວິທະຍາໄລຄູ ສາລະວັນ ແຂວງສາລະວັນ, ສປປ ລາວ*

[*] ***ຕິດຕໍ່ພົວພັນ:*** *ສົມບູນ ສີລີສົງຄາມ, ວິທະຍາໄລຄູ ສາລະວັນ ແຂວງສາລະວັນ, Tel: +856 20 29807672, E-mail: nordala1982@gmail.com*

*[2] ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ*

*ຂໍ້ມູນບົດຄວາມ:*
*ການສົ່ງບົດຄວາມ: 23 ກັນຍາ 2021*
*ປັບປຸງສໍາເລັດ: 21 ມີນາ 2022*
*ການຕອບຮັບ: 26 ເມສາ 2022*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ແມ່ນສຶກສາກ່ຽວກັບ ການບໍລິຫານວຽກງານວິຊາການໂຮງຮຽນປະຖົມສຶກສາຢູ່ເມືອງສາລະວັນ, ແຂວງສາລະວັນ ຊຶ່ງມີຈຸດປະສົງ: 1) ເພື່ອສຶກສາສະພາບການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ; 2) ເພື່ອປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ ໂດຍຈໍາແນກຕາມເພດ, ຕໍາແໜ່ງ, ວຸດທິການສຶກສາ ແລະ ປະສົບການສິດສອນ; 3) ເພື່ອຊອກຫາແນວທາງໃນການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ. ກຸ່ມເປົ້າໝາຍປະກອບດ້ວຍ ຜູ້ບໍລິຫານ 94 ຄົນ, ຄູສອນ 123 ຄົນ. ເຄື່ອງມືທີ່ໃຊ້ແມ່ນໃຊ້ແບບສອບຖາມມາດຕາສ່ວນປະມານຄ່າ 5 ລະດັບ (Rating scale). ວິເຄາະຂໍ້ມູນດ້ວຍໂປຣແກຣມຄອມພິວເຕີສໍາເລັດຮູບ ຄໍານວນຫາຄວາມຖີ່, ເປີເຊັນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ວິເຄາະຂໍ້ມູນຂັ້ນສູງ T-test & F-test. ວິເຄາະຂໍ້ມູນຄວາມຄິດເຫັນເພີ່ມເຕີມດ້ວຍການຈັດກຸ່ມຂໍ້ມູນທີ່ຄ້າຍຄືກັນມາຂຽນແບບບັນຍາຍລຽງຄວາມ.

ຜົນການຄົ້ນຄວ້າພົບວ່າ ການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ. ໂດຍພາບລວມໃນລະດັບດີ, ເມື່ອພິຈາລະນາແຕ່ລະດ້ານເຫັນວ່າຢູ່ໃນລະດັບດີທຸກດ້ານ ແລະ ດີກວ່າໝູ່ແມ່ນການບໍລິຫານການວັດ-ປະເມີນຜົນ, ລອງລົງມາແມ່ນການບໍລິຫານການຈັດການຮຽນ-ການສອນ, ດ້ານຫຼັກສູດ, ດ້ານການນິເທດພາຍໃນ ແລະ ການບໍລິຫານສື່ການຮຽນ-ການສອນຕາມລໍາດັບ. ຜົນການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການບໍລິຫານວຽກງານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ໃນດ້ານການບໍລິຫານຫຼັກສູດ, ການຈັດການຮຽນ-ການສອນ, ສື່ການຮຽນ-ການສອນ, ການວັດ-ປະເມີນຜົນການຮຽນ ແລະ ການນິເທດພາຍໃນໂດຍພາບລວມ ແລະ ແຕ່ລະດ້ານບໍ່ແຕກຕ່າງກັນ. ແນວທາງໃນການບໍລິຫານວຽກງານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ມີຄື: ຕ້ອງມີການປັບປຸງຫຼັກສູດໃຫ້ທັນກັບຍຸກສະໄໝ, ເໝາະສົມກັບລະດັບອາຍຸຂອງນັກຮຽນ, ໂຮງຮຽນຕ້ອງມີການນິເທດຫຼັກສູດກ່ອນການສ້າງໂຄງການສອນເພື່ອຈະຮຽບຮຽງຫຼືບົດໃຫ້ໄປຕາມລະບົບຄວາມຮັບຮູ້ຂອງຜູ້ຮຽນ. ຕ້ອງຈັດກິດຈະກໍາການຮຽນ-ການສອນໃຫ້ແທດເໝາະກັບນັກຮຽນ, ເໝາະກັບລະດັບຄວາມຮູ້-ຄວາມສາມາດ, ອາຍຸ ແລະ ລະດັບສະຕິປັນຍາຂອງນັກຮຽນໂດຍການນໍາໃຊ້ວິທີການສິດສອນທີ່ຫຼາກຫຼາຍຮູບແບບ.ມີແນວທາງໃນການສົ່ງເສີມໃຫ້ຄູໄດ້ຜະລິດສື່ການຮຽນ-ການສອນຫຼາຍຂຶ້ນ. ມີແນວທາງສົ່ງເສີມໃຫ້ຄູໄດ້ອົບຮົມວິທີການວັດ-ປະເມີນຜົນຖືກຕ້ອງ, ໃຫ້ມີການປະເມີນກ່ອນການຮຽນ, ລະຫວ່າງການຮຽນ ແລະ ຫຼັງການຮຽນ. ຕ້ອງມີການສ້າງຄູນິເທດປະຈໍາໂຮງຮຽນ ແລະຕ້ອງໄດ້ຮັບການເຝິກອົບຮົມວິທີການສອນທີ່ຫຼາກຫຼາຍ ແລະ ມີການນິເທດພາຍໃນໂຮງຮຽນຕົນຢ່າງໜ້ອຍປີລະສອງເທື່ອ.

**ຄໍາສັບສໍາຄັນ:** *ການບໍລິຫານ, ວິຊາການ*

# The Primary Schools' Academic Affairs Administration in Salavan District, Salavan Province

**Somboun SYLISONGKHAM[1], Phouvong NORDALA[2], Her KHAMMELEESAYSUE[2], Boy DUANGCHAN[2] and Sulinthong XAYDUANGTA[2]**

*Salavan Teacher Training College, Salavan Province, Lao PDR*

[1]***Correspondence:*** *Somboun SYLISONGKHAM, Salavan Teacher Training College, Salavan Province, Tel: +856 20 29807672, E-mail: nordala1982@gmail.com*

[2]*Faculty of Education, Souphanouvong University*

***Article Info:***

*Submitted: Sep 23, 2021*

*Revised: Mar 21, 2022*

*Accepted: Apr 26, 2022*

**Abstract**

This study focused on the academic administration of Primary Schools in Salavan District, Salavan Province. The key objectives were: 1). to investigate the academic administration, 2) to compare the opinions of administrators and teachers concerning the academic administration classified by sex, position, qualification and teaching experience and 3) to find out the strategies for further development of academic administration. The target group consisted of 94 administrators and 123 teachers. The research tool was the 5 rating scales questionnaire. The computer software program was used for data analysis to find out the frequency, percentage, mean, standard deviation; and the hypothesis was analyzed by t-test and F-test for the differentiation of each variable.

The research results were as follows: the academic administration of Primary Schools in Salavan District was generally ranked at good level. When considering individual aspect, all of them were at good level and the highest one was the assessment and evaluation administration; followed by the administration of learning and teaching, curriculum, internal monitoring and learning-teaching materials respectively. The results of the administrators' and teachers' opinions on the academic administration of Primary Schools in Salavan District, Salavan Province, showed that there is no significant difference in terms of the administration of the curriculum, teaching and learning, materials, assessment and evaluation, and internal monitoring, and the guidelines for the administrative work of the primary school in Saravane district, Saravane province are as follows: the curriculum must be updated to suit the age of the students, the school must have the curriculum orientation before the curriculum in order to arrange the subject according to the student perception system. Teaching and learning activities must be tailored to the students, according to the level of knowledge - ability, age and level of intelligence of students by using a variety of teaching methods. There are ways to encourage teachers to produce more teaching-learning materials. There are ways to encourage teachers to train in accurate measurement and evaluation methods, to have pre-school, during-and-after-school assessments. School-based tutors need to be trained and must be trained in a variety of teaching methods and have at least two in-school tutoring sessions twice a year.

**Keywords**: *Administration, Academic*

## 1. ຄວາມເປັນມາ ແລະ ຄວາມສຳຄັນການວິໃຈ

ພັກເຮົາໄດ້ສຸມໃສ່ການພັດທະນາວັດວຽກງານທະນະທຳ-ສັງຄົມ, ຖືເອົາການພັດທະນາຊັບພະຍາກອນມະນຸດເປັນໃຈກາງ ທັງເປັນບຸລິມະສິດ, ສືບຕໍ່ຊຸກຍູ້ປະຕິຮູບລະບົບການສຶກສາແຫ່ງຊາດໃຫ້ເຂົ້າສູ່ລວງເລິກ, ເຮັດໃຫ້ຄຸນນະພາບການສຶກສາ ໄດ້ມີການຫັນປ່ຽນຢ່າງຕັ້ງໜ້າ ທັງໄດ້ແກ້ໄຂສິ່ງຫຍໍ້ທໍ້ ແລະ ຫັນປ່ຽນຄ່ານິຍົມທີ່ບໍ່ຖືກຕ້ອງຕໍ່ການສຶກສາ, ພວກເຮົາໄດ້ສຳເລັດການບຳລຸງຍົກລະດັບການສຶກສາຊັ້ນປະຖົມໃຫ້ປະຊາຊົນລາວໃນຂອບເຂດທົ່ວປະເທດ ແລະ ມາເຖິງປະຈຸບັນໄດ້ມີຫຼາຍແຂວງໄດ້ບຸກທະລຸໃນການບຳລຸງຍົກລະດັບຂັ້ນມັດທະຍົມສຶກສາຕອນຕົ້ນ. ນອກຈາກນັ້ນ ກໍໄດ້ເອົາໃຈໃສ່ປຸກລະດົມບັນດາຊັ້ນຄົນ ແລະ ພາກສ່ວນຕ່າງໆໃຫ້ເຂົ້າໃຈກ່ຽວກັບວຽກງານການສຶກສາ ແລະ ກິລາ ທີ່ເປັນພາລະກິດຂອງທົ່ວສັງຄົມ ແລະ ໃຫ້ການສະໜັບສະໜູນຊ່ວຍເຫຼືອການພັດທະນາວຽກງານດັ່ງກ່າວຢ່າງກວ້າງຂວາງ (ຄະນະໂຄສະນາອົບຮົມສູນກາງພັກ, 2016)

ລັດໄດ້ເອົາໃຈໃສ່ປະຕິບັດນະໂຍບາຍພັດທະນາການສຶກສາ ປະຕິບັດລະບອບປະຖົມສຶກສາບັງຄັບ ເພື່ອສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ ແລະ ຄວາມສາມາດ. ລັດ ແລະ ທົ່ວສັງຄົມຕັ້ງໜ້າພັດທະນາການສຶກສາແຫ່ງຊາດໃຫ້ມີຄຸນນະພາບ, ສ້າງໂອກາດ ແລະ ເງື່ອນໄຂໃຫ້ປະຊາຊົນລາວໄດ້ຮັບການສຶກສາຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ, ແມ່ຍິງ, ເດັກນ້ອຍ ແລະ ຜູ້ດ້ອຍໂອກາດ. ລັດ ສົ່ງເສີມ ແລະ ຊຸກຍູ້ໃຫ້ເອກະຊົນລົງທຶນເຂົ້າໃນການພັດທະນາການສຶກສາແຫ່ງຊາດຕາມກົດໝາຍ (ກະຊວງຍຸຕິທຳ, 2003).

ຈຸດສຸມຂອງການພັດທະນາການສຶກສາ ແມ່ນການສ້າງບຸກຄະລາກອນປະເພດຕ່າງໆເຊັ່ນ: ກຳມະກອນມືອາຊີບ, ນາຍຊ່າງ, ນັກວິຊາການ, ວິສະວະກອນ, ຜູ້ຄຸ້ມຄອງບໍລິຫານ, ຜູ້ປະກອບການ, ຜູ້ຈັດການ ໃຫ້ມີຄວາມຮູ້-ຄວາມສາມາດ ທັງມີຄຸນນະພາບ ແລະ ມີຈຳນວນພຽງພໍສຳລັບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນທຸກຂົງເຂດພັກ-ລັດ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານໃນທົ່ວສັງຄົມ. ສົ່ງເສີມການຂະຫຍາຍການສຶກສາໃຫ້ກວ້າງຂວາງ, ແຂງແຮງ ແລະ ມີຈຸດສຸມໂດຍເລັ່ງໃສ່ເຂດຊົນນະບົດ, ເຂດຊົນເຜົ່າຫ່າງໄກສອກຫຼີກ. ຖືເອົາການລຶບລ້າງຄວາມບໍ່ຮູ້ໜັງສືຕິດພັນກັບການຈັດຕັ້ງການຮຽນ ແລະ ການເຝິກອົບຮົມວິຊາຊີບຂັ້ນພື້ນຖານຕາມຄວາມຮຽກຮ້ອງຕ້ອງການຂອງແຕ່ລະທ້ອງຖິ່ນ ເພື່ອແກ້ໄຂຄວາມທຸກຍາກ ແລະ ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ (ກະຊວງສຶກສາທິການ ແລະ ກິລາ, 2011)

ການບໍລິຫານວິຊາການໝາຍເຖິງຜູ້ບໍລິຫານໂຮງຮຽນວາງແຜນການ ຈັດຂະບວນການໃນການປະຕິບັດວຽກງານໃຫ້ເກີດປະສິດທິພາບດ້ານວຽກງານວິຊາການໃນສະຖານທີ່ການສຶກສາ ໄດ້ແກ່ການດຳເນີນວຽກງານກ່ຽວກັບຫຼັກສູດ, ຂະບວນການຈັດການຮຽນ-ການສອນ, ການຜະລິດສື່-ອຸປະກອນການຮຽນ, ການນິເທດພາຍໃນ ແລະ ການປະເມີນຜົນການຮຽນ-ການສອນ, ການບໍລິຫານວິຊາການເປັນການບໍລິຫານກ່ຽວກັບການພັດທະນາຄຸນນະພາບການສຶກສາ. ເປັນກິດຈະກຳທຸກຢ່າງພາຍໃນສະຖານທີ່ການສຶກສາທີ່ກ່ຽວຂ້ອງກັບການປັບປຸງ ພັດທະນາການຮຽນ-ການສອນໃຫ້ເກີດຜົນຕາມເປົ້າໝາຍຂອງຫຼັກສູດ ທີ່ເຮັດໃຫ້ນັກຮຽນເກີດການຮຽນຮູ້ຢ່າງມີປະສິດທິພາບ ເຊິ່ງບຸກຄົນທີ່ມີສ່ວນກ່ຽວຂ້ອງຢ່າງໃກ້ຊິດໃນການສົ່ງເສີມວິຊາການໃນໂຮງຮຽນກໍຄື ຜູ້ບໍລິຫານ ແລະ ຄູສອນໃນໂຮງຮຽນ. (ການບໍລິຫານວິຊາການ, 2553)

ບັນຫາຕ່າງໆທີ່ເກີດຂຶ້ນໃນໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນຄື: ຄູສອນບາງຄົນ ບໍ່ມີຫົວຄິດປະດິດສ້າງປະກອບເຂົ້າໃນຂະບວນການຮຽນ-ການສອນບໍ່ທັນມີຫຼາຍວິທີ, ການຜະລິດສື່ການສອນແລະການນຳໃຊ້ບໍ່ໄດ້ດີ, ການບໍລິຫານບາງໂຮງຮຽນບໍ່ເຂັ້ມແຂງເນື່ອງຈາກບັນຫາທີ່ກ່າວມານັ້ນ ຈຶ່ງເຮັດໃຫ້ຄຸນນະພາບຂອງການຮຽນ-ການສອນ ບໍ່ສະເໝີພາບກັນ ຊຶ່ງບົ່ງບອກເຖິງການບໍລິຫານວຽກງານວິຊາການບໍ່ທັນດີປານໃດ (ຫ້ອງການສຶກສາ ເມືອງສາລະວັນ, 2017-2018 )

ຈາກບັນຫາ ແລະ ສາເຫດດັ່ງກ່າວນັ້ນ ທີມງານຜູ້ຄົ້ນຄວ້າມີຄວາມສົນໃຈ ແລະ ຕ້ອງການສຶກສາເພື່ອຢາກຮູ້ວ່າ: ສະພາບການບໍລິຫານວຽກງານວິຊາການໂຮງຮຽນປະ

ຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ເປັນແນວໃດ?. ເພື່ອຊອກຫາແນວທາງໃນການບໍລິຫານວຽກງານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ໃຫ້ດີຂຶ້ນ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍຂອງການຄົ້ນຄວ້າ

ປະຊາກອນໄດ້ແກ່ບຸກຄະລາກອນທັງໝົດຢູ່ໃນໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ສົກຮຽນ 2018 - 2019 ທີ່ມີຈຳນວນທັງໝົດ 501 ຄົນ, ປະກອບມີ 51ໂຮງຮຽນ.

ການກຳນົດກຸ່ມຕົວຢ່າງແມ່ນ ໄດ້ຈາກການເບິ່ງຕາມຕາຕະລາງສຳເລັດຮູບຂອງ ເກຼດຊີ ແລະ ມໍແກນ (Krejcie & Morgan) ຊຶ່ງຂະໜາດຂອງປະຊາກອນມີ 501 ຄົນ, ຂະໜາດກຸ່ມຕົວຢ່າງແມ່ນ 217 ຄົນ, ຍິງ 96 ຄົນ. ໃນນັ້ນມີຜູ້ບໍລິຫານ ມີ 94 ຄົນ ແລະ ຄູສອນ 123 ຄົນ.

### 2.2 ຕົວປ່ຽນໃນການຄົ້ນຄວ້າ

#### 2.2.1 ຕົວປ່ຽນຕົ້ນ

ເພດ, ຕຳແໜ່ງ, ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກ.

#### 2.2.2 ຕົວປ່ຽນຕາມ

ຕົວປ່ຽນຕາມໄດ້ແກ່ ການບໍລິຫານວຽກງານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ທັງ 5 ດ້ານ ຄື: 1. ດ້ານການບໍລິຫານຫຼັກສູດ, 2. ການບໍລິຫານການຈັດການຮຽນ-ການສອນ, 3. ການບໍລິຫານສື່ການຮຽນ-ການສອນ, 4. ການບໍລິຫານການວັດ-ປະເມີນຜົນການຮຽນ, 5. ການບໍລິຫານດ້ານການນິເທດພາຍໃນ.

### 2.3 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນຄັ້ງນີ້ ແມ່ນແບບສອບຖາມ ສຳລັບຖາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບ ການບໍລິຫານວິຊາການ ຂອງໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ, ຊຶ່ງປະກອບດ້ວຍ 3 ຕອນ ດັ່ງນີ້:

ຕອນທີ 1: ເປັນຄຳຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ທີ່ຕອບແບບສອບຖາມ ເປັນກວດສອບລາຍການ (Check list) ຊຶ່ງປະກອບດ້ວຍເພດ, ຕຳແໜ່ງ, ວຸດທິການສຶກສາ ແລະ ປະສົບການໃນການສອນ.

ຕອນທີ 2: ເປັນຄຳຖາມກ່ຽວກັບຄວາມຄິດເຫັນກ່ຽວກັບການບໍລິຫານວິຊາການຢູ່ໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ, ໃນຫ້າດ້ານຄື: 1. ການບໍລິຫານດ້ານຫຼັກສູດ, 2. ການບໍລິຫານດ້ານການຈັດການຮຽນ-ການສອນ, 3. ການບໍລິຫານດ້ານສື່ການຮຽນ-ການສອນ, 4. ການບໍລິຫານດ້ານການວັດ-ປະເມີນຜົນການຮຽນ ແລະ 5. ການບໍລິຫານດ້ານການນິເທດພາຍໃນ. ຕາມແບບມາດຕາສ່ວນປະມານຄ່າ (Rating scale) 5 ລະດັບ ແລະ ໄດ້ກຳນົດນ້ຳໜັກຄະແນນດັ່ງນີ້:

- ຄະແນນ 5 ໝາຍເຖິງສະພາບການບໍລິຫານວິຊາການໃນລະດັບດີທີ່ສຸດ
- ຄະແນນ 4 ໝາຍເຖິງສະພາບການບໍລິຫານວິຊາການໃນລະດັບດີ
- ຄະແນນ 3 ໝາຍເຖິງສະພາບການບໍລິຫານວິຊາການໃນລະດັບປານກາງ
- ຄະແນນ 2 ໝາຍເຖິງສະພາບການບໍລິຫານວິຊາການໃນລະດັບອ່ອນ
- ຄະແນນ 1 ໝາຍເຖິງສະພາບການບໍລິຫານວິຊາການໃນລະດັບອ່ອນທີ່ສຸດ

ຕອນທີ 3: ເປັນຄຳຖາມແບບປາຍເປີດ ເພື່ອຖາມຄວາມຄິດເຫັນເພີ່ມເຕີມກ່ຽວກັບການບໍລິຫານວິຊາການຢູ່ໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ. ໃນ 5 ດ້ານຄື: 1. ການບໍລິຫານດ້ານຫຼັກສູດ, 2. ການບໍລິຫານການຈັດການຮຽນ-ການສອນ, 3. ການບໍລິຫານສື່ການຮຽນ-ການສອນ, 4. ການບໍລິຫານການວັດ-ປະເມີນຜົນ ແລະ 5. ການບໍລິຫານດ້ານການນິເທດພາຍໃນ.

### 2.4 ວິທີການວິເຄາະຂໍ້ມູນ

ທີມງານຄົ້ນຄວ້າກວດສອບຄວາມຖືກຕ້ອງຂອງຂໍ້ມູນ ແລະ ວິເຄາະຂໍ້ມູນໂດຍການໃຊ້ໂປຣແກຣມສຳເລັດຮູບຕາມຂັ້ນຕອນດັ່ງນີ້:

1) ວິເຄາະຂໍ້ມູນກ່ຽວກັບສະຖານະພາບທົ່ວໄປຂອງຜູ້ຕອບແບບສອບຖາມໃນຕອນທີ່ໜຶ່ງ ໂດຍການກຳນົດຫາຄ່າຄວາມຖີ່ ( $f$ ) ແລະ ຫາຄ່າສ່ວນຮ້ອຍ (%) ນຳສະເໜີເປັນຕາຕະລາງ.

2) ວິເຄາະຂໍ້ມູນຜູ້ບໍລິຫານ ແລະ ຄູສອນໃຊ້ຂໍ້ມູນຈາກແບບສອບຖາມທີ່ສອງ ໂດຍການຫາຄ່າສະເລ່ຍ( $\bar{X}$ ) ແລະ ຄ່າຜັນປ່ຽນມາດຕະຖານ($SD$) ຂອງຄະແນນຜູ້ບໍລິຫານ ແລະ ຄູສອນໂຮງຮຽນປະຖົມສຶກສາເມືອງສາລະວັນ. ໂດຍການກຳນົດເກນຄ່າສະເລ່ຍດັ່ງນີ້ ບຸນຊົມ ສີສະອາດ (2010).

- ຄ່າສະເລ່ຍ 4.51 - 5.00 ໝາຍຄວາມວ່າ ສະພາບການບໍລິຫານວິຊາການໃນລະດັບດີທີ່ສຸດ.
- ຄ່າສະເລ່ຍ 3.51 - 4.50 ໝາຍຄວາມວ່າ ສະພາບການບໍລິຫານວິຊາການໃນລະດັບດີ.
- ຄ່າສະເລ່ຍ 2.51 - 3.50 ໝາຍຄວາມວ່າ ສະພາບການບໍລິຫານວິຊາການໃນລະດັບປານກາງ.
- ຄ່າສະເລ່ຍ 1.51 - 2.50 ໝາຍຄວາມວ່າ ສະພາບການບໍລິຫານວິຊາການໃນລະດັບອ່ອນ
- ຄ່າສະເລ່ຍ 1.00 - 1.50 ໝາຍຄວາມວ່າ ສະພາບການບໍລິຫານວິຊາການໃນລະດັບອ່ອນທີ່ສຸດ.

3) ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນໃຊ້ສະຖິຕິທົດສອບ (T-test) ທີ່ມີຕົວປ່ຽນສອງລະດັບ ແລະ ໃຊ້ສະຖິຕິທົດສອບ (F-test) ທີ່ມີຕົວປ່ຽນສາມລະດັບດ້ວຍການວິເຄາະຄວາມຜັນປ່ຽນແບບຈຳແນກທາງດຽວ (One way ANOVA).

4) ການວິເຄາະຂໍ້ມູນຄວາມຄິດເຫັນເພີ່ມເຕີມດ້ວຍການຈັດກຸ່ມຂໍ້ມູນທີ່ຄ້າຍຄືກັນມາຂຽນເປັນບັນຍາຍແບບລຽງຄວາມ.

## 3. ຜົນໄດ້ຮັບ

1). ການບໍລິຫານວຽກງານວິຊາການຂອງໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ໂດຍພາບລວມໃນລະດັບດີ ($\bar{X}$=4.17; SD=0.422) ເມື່ອພິຈາລະນາແຕ່ລະດ້ານເຫັນວ່າຢູ່ໃນລະດັບດີທຸກດ້ານ ແລະ ດີກວ່າໝູ່ແມ່ນການບໍລິຫານການວັດ-ປະເມີນຜົນ ($\bar{X}$=4.32; SD=0.60), ຮອງລົງມາແມ່ນການບໍລິຫານການຈັດການຮຽນ-ການສອນ ($\bar{X}$=4.29; SD=0.44) ແລະ ການບໍລິຫານສື່ການຮຽນ - ການສອນໜ້ອຍກວ່າທຸກດ້ານ ($\bar{X}$=3.89; SD=0.49).

2). ຜົນການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການບໍລິຫານວຽກງານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ໃນດ້ານການບໍລິຫານຫຼັກສູດ, ການຈັດການຮຽນ-ການສອນ, ສື່ການຮຽນ-ການສອນ, ການວັດ-ປະເມີນຜົນການຮຽນ ແລະ ການນິເທດພາຍໃນໂດຍພາບລວມ ແລະ ແຕ່ລະດ້ານບໍ່ແຕກຕ່າງກັນ.

3) ຜົນການສັງລວມຄວາມຄິດເຫັນແນວທາງການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ມີດັ່ງນີ້:

1. ດ້ານການບໍລິຫານຫຼັກສູດ: ຕ້ອງມີການປັບປຸງຫຼັກສູດໃຫ້ເໝາະສົມກັບລະດັບອາຍຸຂອງນັກຮຽນປັບປຸງເນື້ອໃນບາງວິຊາຮຽນ, ໂຮງຮຽນຕ້ອງມີການນິເທດຫຼັກສູດກ່ອນການສ້າງໂຄງການສອນເພື່ອຈະຮຽບຮຽງຫຼືວບົດໃຫ້ໄປຕາມລະບົບຄວາມຮັບຮູ້ຂອງຜູ້ຮຽນ, ພັດທະນາຫຼັກສູດໃຫ້ທັນກັບຍຸກສະໄໝ ແລະ ໃຫ້ທັນກັບການນຳໃຊ້ເຕັກໂນໂລຢີຍຸກໃໝ່.

2. ດ້ານການບໍລິຫານການຈັດການຮຽນ-ການສອນ: ຕ້ອງຈັດກິດຈະກຳການຮຽນ-ການສອນໃຫ້ແທດເໝາະກັບນັກຮຽນ, ເໝາະກັບລະດັບຄວາມຮູ້-ຄວາມສາມາດ, ອາຍຸ ແລະ ລະດັບສະຕິປັນຍາຂອງນັກຮຽນໂດຍການນຳໃຊ້ວິທີການສິດສອນທີ່ຫຼາກຫຼາຍຮູບແບບ.

3. ການບໍລິຫານສື່ການຮຽນ-ການສອນ: ມີແນວທາງໃນການສົ່ງເສີມໃຫ້ຄູໄດ້ຜະລິດສື່ການຮຽນ-ການສອນ, ການນຳໃຊ້ສື່ ຫຼື ສະແດງສື່ໃຫ້ເໝາະສົມ ແລະ ມີສ່ວນຮ່ວມຂອງນັກຮຽນໃນການສ້າງສື່ການຮຽນ-ການສອນໃຫ້ຫຼາຍເພື່ອໃຫ້ເດັກໄດ້ພັດທະນາທັກສະ ທັງເຂົ້າໃຈຕໍ່ກັບສື່, ມີການນຳໃຊ້ສື່ທີ່ຫາໄດ້ໃນທ້ອງຖິ່ນເພື່ອປະກອບເຂົ້າໃນການຮຽນ-ການສອນໃຫ້ຫຼາຍຂຶ້ນ.

4. ດ້ານການບໍລິຫານການວັດ-ປະເມີນຜົນການຮຽນ: ມີແນວທາງສົ່ງເສີມໃຫ້ຄູໄດ້ອົບຮົມວິທີການວັດ-ປະເມີນຜົນຖືກຕ້ອງ, ໃຫ້ມີການປະເມີນກ່ອນການຮຽນ, ລະຫວ່າງການຮຽນ ແລະ ຫຼັງການຮຽນ ແລະ ການປະເມີນຕ້ອງມີ

ລະດັບຄວາມຍາກ-ງ່າຍຂອງກິດຈະກຳເພື່ອຊຸກຍູ້ໃຫ້ນັກຮຽນຄົ້ນຄວ້າບົດຮຽນໃຫ້ຫຼາຍຂຶ້ນ.

5. ດ້ານການບໍລິຫານການນິເທດພາຍໃນ: ຕ້ອງມີການສ້າງຄູນິເທດປະຈຳໂຮງຮຽນ ແລະຕ້ອງໄດ້ຮັບການເຝິກອົບຮົມວິທີການສອນທີ່ຫຼາກຫຼາຍເພື່ອມາເຜີຍແຜ່ໃຫ້ຄູໃນໂຮງຮຽນຕົນຮັບຮູ້ ແລະ ວິຊາການຂອງໂຮງຮຽນຕ້ອງຈັດການນິເທດພາຍໃນໂຮງຮຽນຕົນຢ່າງໜ້ອຍປີລະສອງເທື່ອ.

## 4. ວິພາກຜົນ

ຈາກການສຶກສາການບໍລິຫານວິຊາການໂຮງຮຽນປະຖົມສຶກສາ ເມືອງສາລະວັນ, ແຂວງສາລະວັນໃນ 5 ດ້ານ ພົບວ່າ: ການບໍລິຫານວິຊາການ ຂອງໂຮງຮຽນປະຖົມສຶກສາ ເມືອງສາລະວັນ, ແຂວງສາລະວັນ ໂດຍພາບລວມ ແລະ ແຕ່ລະດ້ານແມ່ນຢູ່ໃນລະດັບດີ ເມື່ອພິຈາລະນາແຕ່ລະດ້ານເຫັນວ່າໃນລະດັບດີ ແຕ່ເມື່ອລຽງລຳດັບແຕ່ຫຼາຍຫາໜ້ອຍໄດ້ແກ່ ດ້ານການບໍລິຫານການວັດ-ປະເມີນຜົນການຮຽນ; ຮອງລົງມາແມ່ນດ້ານການບໍລິຫານການຈັດການຮຽນ-ການສອນ; ຮອງລົງມາແມ່ນດ້ານການບໍລິຫານຫຼັກສູດ; ຮອງລົງມາແມ່ນການບໍລິຫານນິເທດພາຍໃນຕາມລຳດັບ ແລະ ດ້ານທີ່ມີຄ່າສະເລ່ຍໜ້ອຍແມ່ນດ້ານການບໍລິຫານສື່ການຮຽນ-ການສອນ. ຊຶ່ງສອດຄ່ອງກັບບົດວິໄຈຂອງ ວັນສະຣະ ຂັນທະສິນບັດ (2010) ໄດ້ສຶກສາກ່ຽວກັບການສຶກສາສະພາບການບໍລິຫານວິຊາການ ຂອງໂຮງຮຽນຂະໜາດນ້ອຍ ທີ່ມີຄູສອນບໍ່ຄົບຊັ້ນ ສັງກັດສຳນັກເຂດພື້ນທີ່ການສຶກສາປະຖົມສຶກສານະຄອນລາດສະສີມາເຂດ 2 ຊຶ່ງຜົນຂອງການຄົ້ນຄວ້າສະຫຼຸບໄດ້ ສະພາບການບໍລິຫານວິຊາການຂອງໂຮງຮຽນຂະໜາດນ້ອຍ ທີ່ມີຄູສອນບໍ່ຄົບຊັ້ນ ສັງກັດສຳນັກເຂດພື້ນທີ່ການສຶກສາການປະຖົມສຶກສານະຄອນລາດສະສີມາເຂດ 2 ໂດຍພາບລວມ ແລະ ແຕ່ລະດ້ານແມ່ນຢູ່ໃນລະດັບຫຼາຍ. ດ້ານການວັດ-ປະເມີນຜົນການຮຽນ ໂດຍລວມແມ່ນຢູ່ໃນລະດັບດີເມື່ອພິຈາລະນາເປັນແຕ່ລະຂໍ້ແລ້ວພົບວ່າທຸກຂໍ້ ດ້ານທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນມີການກວດກາປະຈຳເດືອນ ແລະ ຈັດການສອບເສັງໃນແຕ່ລະພາກຮຽນ; ຮອງລົງມາແມ່ນແຈ້ງຜົນການສອບເສັງທຸກຄັ້ງໃຫ້ນັກຮຽນຮູ້; ຮອງລົງມາມີການວັດ-ປະເມີນຜົນກ່ອນຮຽນ, ລະຫວ່າງຮຽນ ແລະ ຫຼັງການຮຽນຕາມລຳດັບ ແລະ ຂໍ້ທີ່ໄດ້ຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນມີການພັດທະນາເຄື່ອງມືວັດ ແລະ ປະເມີນຜົນເພື່ອຕອບສະໜອງຜົນຂອງການຮຽນຮູ້. ຊຶ່ງສອດຄ່ອງກັບພຣະມະຫາປະຈັດ ກິດຕິເມທີ (2011) ໄດ້ຄົ້ນຄ້ວາກ່ຽວກັບການບໍລິຫານວິຊາການສຳນັກຮຽນປະລິຍັດຕິທຳພະແນກບາລີດີເດັ່ນ ກຸງເທບມະຫານະຄອນ ຊຶ່ງຜົນການຄົ້ນຄ້ວາພົບວ່າ ການບໍລິຫານວິຊາການສຳນັກຮຽນປະລິຍັດຕິທຳພະແນກບາລີດີເດັ່ນກຸງເທບມະຫານະຄອນຕາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູມີຄ່າສະເລ່ຍລະດັບດີ ແລະ ສອດຄ່ອງກັບ ລັດສະໝີ ທຳມະວົງສາ (2010) ໄດ້ສຶກສາກ່ຽວກັບສະພາບບັນຫາການບໍລິຫານວິຊາການ ວິທະຍາໄລເອກະຊົນໃນ ນະຄອນຫຼວງວຽງຈັນ ຜົນການຄົ້ນຄວ້າພົບວ່າ ໂດຍພາບລວມຢູ່ໃນລະດັບກາງ ແຕ່ເມື່ອພິຈາລະນາເປັນລາຍດ້ານເຫັນວ່າດ້ານການວັດ-ປະເມີນຜົນຢູ່ໃນລະດັບດີຫຼາຍອາດເນື່ອງຈາກວ່າ ຜູ້ບໍລິຫານ ແລະ ໜ່ວຍງານວິຊາການໃຫ້ຄວາມສຳຄັນໃນດ້ານນີ້ ໂດຍສະເພາະແມ່ນເອົາໃຈໃສ່ເລື່ອງການຈັດຕາຕະລາງສອບເສັງ, ຈັດກົດລະບຽບການສອບເສັງ, ການແຈ້ງຜົນການສອບເສັງໃຫ້ນັກຮຽນຮັບຮູ້, ນຳຫຼັກການວັດ-ປະເມີນຜົນມາໃຊ້ເພື່ອປະເມີນຜົນການຮຽນ ແລະ ສ້າງປະຕິທິນປະຕິບັດວຽກງານກ່ຽວກັບການວັດ ແລະ ປະເມີນຜົນ. ດ້ານການບໍລິຫານການຈັດການຮຽນ-ການສອນ ໂດຍລວມແມ່ນຢູ່ໃນລະດັບດີ. ຊຶ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ວຽງຄຳ ສິງວົງສາ (2013) ໄດ້ສຶກສາຄົ້ນຄວ້າກ່ຽວກັບສະພາບການບໍລິຫານວິຊາການ ຂອງໂຮງຮຽນມັດທະຍົມສຶກສາສົມບູນໃນນະຄອນຫຼວງວຽງຈັນ ຜົນການຄົນຄ້ວາເຫັນວ່າ ການບໍລິຫານການຈັດການຮຽນ-ການສອນຢູ່ໃນລະດັບດີ. ດ້ານການບໍລິຫານຫຼັກສູດ ໂດຍພາບລວມຢູ່ໃນລະດັບດີເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າ ຢູ່ໃນລະດັບດີທຸກຂໍ້ ແລະ ຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນມີການຈັດຕາຕະລາງການຮຽນ-ການສອນປະຈຳພາກຮຽນ ແລະ ປະຈຳປີຮຽນ; ຮອງລົງມາແມ່ນມີການປະຕິບັດຫຼັກສູດຕາມນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້; ຮອງລົງມາມີການປະເມີນຫຼັກສູດໃນແຕ່ລະປີ; ຮອງລົງມາມີການແນະນຳໃຫ້ຄູເຂົ້າໃຈກ່ຽວກັບການນຳໃຊ້ຫຼັກສູດຕາມລຳດັບ. ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໄດ້ແກ່ໃຫ້ຊຸມຊົນເຂົ້າມາມີ

ສ່ວນຮ່ວມໃນການພັດທະນາຫຼັກສູດ ແລະ ນຳໃຊ້ຫຼັກສູດ. ດ້ານການບໍລິຫານການນິເທດພາຍ ໂດຍພາບລວມແມ່ນດີ ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍສູງກ່ວາໝູ່ແມ່ນມີແນະນຳຊ່ວຍເຫຼືອ ແລະ ໃຫ້ກຳລັງໃຈແກ່ຄູໃນການປະຕິບັດວຽກງານ; ຮອງລົງມາມີການສັງເກດການຮຽນ-ການສອນໃນແຕ່ລະຂັ້ນຮຽນເປັນປະຈຳ; ຮອງລົງມາມີການບັນທຶກຂໍ້ມູນການນິເທດ ແລະ ຖອດຖອນບົດຮຽນໃນການນິເທດທຸກຄັ້ງຕາມລຳດັບ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນມີການເຝິກອົບຮົມການນິເທດແຕ່ລະວິຊາສອນໃຫ້ຄູ. ຊຶ່ງສອດຄ່ອງກັບບົດສະຫຼູບຂອງມະນີຈັນ ພົງສະຫວັດມີໄຊ (2014) ເວົ້າວ່າ ການນິເທດພາຍໃນຖືວ່າມີຄວາມຈຳເປັນຢ່າງຍິ່ງ ແລະ ເປັນການພັດທະນາຄຸນນະພາບຂອງວຽກງານວິຊາການເພື່ອໃຫ້ເປັນໄປຕາມຈຸດມຸ່ງໝາຍຂອງການສຶກສາພ້ອມທັງຊ່ວຍເຫຼືອໃຫ້ຄູເຮັດວຽກງານຢ່າງມີປະສິດທິພາບ. ດ້ານການບໍລິຫານສື່ການຮຽນ-ການສອນ ໂດຍພາບລວມແມ່ນຢູ່ໃນລະດັບດີ ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າດ້ານທີ່ມີຄ່າສະເລ່ຍສູງກ່ວາໝູ່ຄູສາມາດນຳໃຊ້ອຸປະກອນທີ່ມີໃນທ້ອງຖິ່ນມາປະກອບເປັນສື່ການຮຽນ-ການສອນ; ຮອງລົງມາແມ່ນມີການກະກຽມສື່ ແລະ ອຸປະກອນເຂົ້າໃນການຮຽນ-ການສອນ; ຮອງລົງມາມີການເຝິກອົບຮົມວິທີການຜະລິດ ແລະ ການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ. ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍແມ່ນມີຫ້ອງສະໝຸດຕອບສະໜອງປຶ້ມຕຳລາ, ເອກະສານຄົບຖ້ວນຕາມແຕ່ລະວິຊາຮຽນ; ຮອງລົງມາມີການນຳໃຊ້ສື່ທີ່ທັນສະໄໝເຂົ້າໃນການຮຽນ-ການສອນ. ຊຶ່ງສອດຄ່ອງກັບ ພອນພູລັກ ບົວລະວົງ (2014) ໄດ້ສຶກສາກ່ຽວກັບການບໍລິຫານວິຊາການວິທະຍາໄລສຸຂະພາບໃນ ສປປ ລາວ ຜົນການຄົ້ນຄວ້າດ້ານການບໍລິຫານສື່ການຮຽນ-ການສອນ ໂດຍພາບລວມຢູ່ໃນ ລະດັບດີ.

## 5. ສະຫຼຸບ

1). ການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ໂດຍພາບລວມໃນລະດັບດີ.

2). ຜົນການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການບໍລິຫານວຽກງານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນ ໃນດ້ານການບໍລິຫານຫຼັກສູດ, ການຈັດການຮຽນ-ການສອນ, ສື່ການຮຽນ-ການສອນ, ການວັດ-ປະເມີນຜົນການຮຽນ ແລະ ການນິເທດພາຍໃນ ແຕ່ລະດ້ານບໍ່ມີຄວາມແຕກຕ່າງກັນ.

3). ແນວທາງໃນການບໍລິຫານວຽກງານວິຊາການໂຮງຮຽນປະຖົມສຶກສາເມືອງສາລະວັນ, ແຂວງສາລະວັນມີຄື: ຕ້ອງມີການປັບປຸງຫຼັກສູດໃຫ້ທັນກັບຍຸກສະໄໝ, ເໝາະສົມກັບລະດັບອາຍຸຂອງນັກຮຽນ, ໂຮງຮຽນຕ້ອງມີການນິເທດຫຼັກສູດກ່ອນການສ້າງໂຄງການສອນເພື່ອຈະຮຽບຮຽງຫືອບົດໃຫ້ໄປຕາມລະບົບຄວາມຮັບຮູ້ຂອງຜູ້ຮຽນ. ຕ້ອງຈັດກິດຈະກຳການຮຽນ-ການສອນໃຫ້ແທດເໝາະກັບນັກຮຽນ, ເໝາະກັບລະດັບຄວາມຮູ້-ຄວາມສາມາດ, ອາຍຸ ແລະ ລະດັບສະຕິປັນຍາຂອງນັກຮຽນໂດຍການນຳໃຊ້ວິທີການສິດສອນທີ່ຫຼາກຫຼາຍຮູບແບບ.ມີແນວທາງໃນການສົ່ງເສີມໃຫ້ຄູໄດ້ຜະລິດສື່ການຮຽນ-ການສອນຫຼາຍຂຶ້ນ. ມີແນວທາງສົ່ງເສີມໃຫ້ຄູໄດ້ອົບຮົມວິທີການວັດ-ປະເມີນຜົນຖືກຕ້ອງ, ໃຫ້ມີການປະເມີນກ່ອນການຮຽນ, ລະຫວ່າງການຮຽນ ແລະ ຫຼັງການຮຽນ. ຕ້ອງມີການສ້າງຄູນິເທດປະຈຳໂຮງຮຽນ ແລະ ມີການນິເທດພາຍໃນໂຮງຮຽນຕົນຢ່າງໜ້ອຍປີລະສອງເທື່ອ.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ພວກຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບ.

## 7. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2011). 4 ບຸກທະລຸຂະແໜງການສຶກສາ. ນະຄອນຫຼວງວຽງຈັນ: ສຶກສາໃໝ່.

ກະຊວງສຶກສາທິການແລະກິລາ . (2016). ກົດໝາຍວ່າດ້ວຍການສຶກສາສະບັບປັບປຸງ. ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາທິການ.

ກະຊວງຍຸຕິທຳ. (2003). ລັດຖະທຳມະນູນ. ນະຄອນຫຼວງວຽງຈັນ: ກະຊວງຍຸຕິທຳ.

ກະມົນ ພູ່ປະເສີດ. (2546). ການບໍລິຫານວິຊາການໃນສະຖານການສຶກສາ, ຊຸດພັດທະນາສູ່ມາດຕະຖານການສຶກສາຂັ້ນພື້ນຖານ. ກຸງເທບ: ກຸງເທບ.

ຄະນະໂຄສະນາອົບຮົມສູນກາງພັກ. (2016). ມະຕິກອງປະຊຸມໃຫຍ່ຄັ້ງທ X. ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງລັດ.

ຄຳຈັນ ວັນນະສີ ແລະ ຫຼຽນທອງ ສຸດທິວົງ. (2002). ການບໍລິຫານວິຊາການ. ນະຄອນຫຼວງວຽງຈັນ: ກະຊວງສຶກສາ.

ສີສຸກ ວົງວິຈິດ. (2012). ການບໍລິຫານວິຊາການໂຮງຮຽນປະຖົມສຶກສາ ສປປລ. ກຸງເທບ: ປະສານການພິມ.

ສີສຸກ ວົງວິຈິດ. (2553). ການບໍລິຫານວິຊາການ. ນະຄອນຫຼວງວຽງຈັນ.

ສັນຕິ ບຸນພິລົມ. (2553). ການບໍລິການວິຊາການ. ນົນທະບູລີ: ໄທຮົ່ມເກົ້າ.

ສັນຕິ ບຸນພິລົມ. (2553:64-284). ການບໍລິຫານວິຊາການ. ນົນທະບູລີ: ໄທຮົ່ມເກົ້າ.

ປຣີຍະພອນ ວົງອະນຸຕະໂຣດ. (2535). ການບໍລິຫານວິຊາການ. ກຸງເທບ: ກຸງເທບການພິມ.

ປຣີຍາພອນ ວົງອະນຸຕະໂຣດ. (2546). ການບໍລິຫານວິຊາການ. ກຸງເທບ: ສູນສື່ເສີມກຸງເທບ.

ພ້ອມພັນ ອຸດົມສິນ. (2544). ການວັດ ແລະ ການປະເມີນຜົນການຮຽນ-ການສອນ. ກຸງເທບ.

ພຣະມະຫາປະຈັກ ກິດຕິເມທີ. (2554). ການບໍລິຫານວິຊາການສຳລັບນັກຮຽນປະລິຍະທຳ ພະແນກບາລີດີເດັ່ນກຸງເທບ. ກຸງເທບ.

ມະນີຈັນ ພົງສະຫວັດມີໄຊ. (2014). ການບໍລິຫານວິຊາການໂຮງຮຽນມັດທະຍົມສົມບູນເມືອງນາຊາຍທອງ. ນະຄອນຫຼວງວຽງຈັນ.

ມະນີຈັນ ພົງສະຫວັດມີໄຊ. (2015). ການບໍລິຫານວະຊາການໂຮງຮຽນມັດທະຍົມສຶກສາເມືອງນາຊາຍທອງ ນະຄອນຫຼວງວຽງຈັນ. ນະຄອນຫຼວງວຽງຈັນ.

ລັດສະໝີ ທຳມະວົງສາ. (2010). ສະພາບແລະບັນຫາການບໍລິຫານວິຊາການຂອງວິທະຍາໄລເອກະຊົນໃນນະຄອນຫຼວງວຽງຈັນ. ນະຄອນຫຼວງວຽງຈັນ.

ວຽງຄຳ ສີງວົງສາ. (2013). ສະພພາບການບໍລິຫານວິຊາການຂອງຜູ້ບໍລິຫານໂຮງຮຽນມັດທະຍົມສົມບູນນະຄອນຫຼວງວຽງຈັນ. ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ.

ວັນສະຣະ ຂັນທະສົມບັດ. (2553). ສະພາບການບໍລິຫານວິຊາການຂອງໂຮງຮຽນຂະໜາດນ້ອຍມີຄູສອນບໍ່ຄົບຊັ້ນສັງກັດເຂດພື້ນທີ່ການສຶກສານະຄອນລາດສະສີມາ. ນະຄອນລາດສະສີມາ.

ຫ້ອງການສຶກສາທິການ ແລະ ກິລາ ເມືອງສາລະວັນ. (2017-2018). ບົດສະຫຼູບແຜນພັດທະນາການສຶກສາຫ້ອງການສຶກສາເມືອງສາລະວັນ. ເມືອງສາລະວັນ: ຫ້ອງການສຶກສາທິການ ແລະ ກິລາ ເມືອງສາລະວັນ.